# ຫຼັກຖານຢັ້ງຢືນການເປັນພົນລະເມືອງແລະລັກສະນະສ່ວນຕົວບຸກຄົນ

## ຂໍ້ກຳນົດໃໝ່ສຳລັບຜູ້ຮັບຜົນປະໂຫຍດ Medi-Cal

## ຊຶ່ງເປັນພົນລະເມືອງ ຫຼືປະຊາຊົນສະຫະລັດ

ກົດໝາຍໃໝ່ເວົ້າວ່າ ຜູ້ຮັບຜົນປະໂຫຍດ Medi-Cal ສ່ວນຫຼາຍ ຊຶ່ງເປັນພົນລະເມືອງຫຼືປະຊາຊົນສະຫະລັດ ຕ້ອງສະແດງຫຼັກຖານຢັ້ງຢືນ ການເປັນພົນລະເມືອງ ແລະຢັ້ງຢືນລັກສະນະສ່ວນຕົວບຸກຄົນ. ຈົ່ງອ່ານຂ້າງລຸ່ມນີ້ ເພື່ອເບິ່ງວ່າ ກົດໝາຍນີ້ນຳໃຊ້ກັບທ່ານໄດ້ຫຼືບໍ່.

**ຖ້າວ່າ ທ່ານບໍ່ແມ່ນປະຊາຊົນຊາວສະຫະລັດ, ກົດໝາຍນີ້ນຳໃຊ້ກັບທ່ານບໍ່ໄດ້.**

**ກົດໝາຍໃໝ່ນຳໃຊ້ບໍ່ ໄດ້ກັບພົນລະເມືອງ ຫຼືປະຊາຊົນຊາວສະຫະລັດ ທີ່ຢູ່ໃນປະເພດໃດນຶ່ງຕໍ່ໄປນີ້:**

- ໃຜຜູ້ນຶ່ງທີ່ມີ:
  - ລາຍໄດ້ປະກັນສັງຄົມເພີ້ມຕື່ມ (SSI)
  - Medicare (ເມດິແຄ)
  - ປະກັນສັງຄົມສຳລັບຜູ້ພິການ (SSDI)
  - ເບັ້ຽບຳນານປະກັນສັງຄົມ ແລະປະກັນພັຍຜູ້ລອດຊີວິດ (RSI – Title II) ອີງຕາມຄວາມພິການຂອງເຂົາ
- ບຸກຄົນທີ່ມີອາຍຸຕ່ຳກວ່າ 21 ຊຶ່ງຮ້ອງຂໍບໍລິການ ດ້ານການຍິນຍອມຂອງບຸກຄົນທີ່ອາຍຸບໍ່ເຖິງກະສຽນ
- ເດັກທີ່ເກີດຈາກຜູ້ຍິງທີ່ຢູ່ໃນໂຄງການ Medi-Cal
- ເດັກທີ່ຢູ່ໃນບ້ານອຸປະຖັມ, ໂຄງການຊ່ວຍເຫຼືອລູກບຸນທຳ, ຫຼືໂຄງການ Kin-Gap
- ເດັກທີ່ຢູ່ໃນໂຄງການເດັກນ້ອຍທີ່ຖືກປະຖິ້ມ (Abandoned Baby Program)
- ຜູ້ຮັບຜົນປະໂຫຍດໃນໂຄງການ CalWORKs

### ຈະເຮັດແນວໃດ ຖ້າວ່າ ຂ້າພະເຈົ້າບໍ່ແມ່ນບຸກຄົນ ຂ້າງເທິງນີ້?

ຖ້າວ່າ ທ່ານເປັນພົນລະເມືອງ ຫຼືປະຊາຊົນສະຫະລັດ, ທ່ານຈະຕ້ອງຈັດຫາຫຼັກຖານການເປັນພົນລະເມືອງແລະຢັ້ງຢືນລັກສະນະສ່ວນຕົວ ບຸກຄົນເພື່ອສືບຕໍ່ການມີສິດໄດ້ຮັບ Medi-Cal. (ເບິ່ງໜ້າ 3 ສຳລັບ ລາຍການ ເອກະສານຢັ້ງຢືນການເປັນພົນລະເມືອງແລະລັກສະນະສ່ວນຕົວທີ່ສາມາດຍອມຮັບໄດ້.)

ປະຊາຊົນຊາວສະຫະລັດ ລວມເຖິງ ບຸກຄົນທີ່ເກີດໃນອະເມລິກັນ ຊາມົວ (ລວມເຖິງ ເກາະສະເວນ) ແລະ ບຸກຄົນໃດນຶ່ງທີ່ມາຈາກ ໝູ່ເກາະ ນອທເທິນ ມາເຣັຽນາ.

### ຈະເຮັດແນວໃດ ຖ້າວ່າ ຂ້າພະເຈົ້າ ບໍ່ແມ່ນ ພົນລະເມືອງສະຫະລັດ?

ຖ້າວ່າ ທ່ານບໍ່ແມ່ນພົນລະເມືອງ ຫຼື ປະຊາຊົນສະຫະລັດ, ທ່ານຈຳຕ້ອງຈັດຫາເອກະສານແບບດຽວກັນກັບສິ່ງທີ່ທ່ານເຄີຍຈັດຫາ ໃຫ້ແຕ່ກ່ອນ. ບໍ່ມີຫຍັງປ່ຽນແປງ.

### ຜົນປະໂຫຍດປະກັນພັຍຄຸ້ມຄອງຂອງຂ້າພະເຈົ້າຈະສືບຕໍ່ ດົນປານໃດ?

ຜົນປະໂຫຍດ Medi-Cal ຂອງທ່ານຈະມີສືບຕໍ່ໄປ ຖ້າວ່າທ່ານມີເງື່ອນໄຂຄົບຖ້ວນຕາມຂໍ້ກຳນົດທັງໝົດ ແລະໄດ້ພະຍາຍາມຢ່າງສົມເຫດຜົນທີ່ຈະຈັດຫາຫຼັກຖານຢັ້ງຢືນການເປັນພົນລະເມືອງ ແລະລັກສະນະສ່ວນຕົວບຸກຄົນ. ທ່ານຕ້ອງບອກພະນັກງານດູແລສິດທິໄດ້ຮັບຂອງທ່ານວ່າທ່ານກຳລັງພະຍາຍາມຈັດຫາຫຼັກຖານຢັ້ງຢືນຢູ່.

### ຂ້າພະເຈົ້າຈະຫາຫຼັກຖານຢັ້ງຢືນການເປັນພົນລະເມືອງ ໄດ້ແນວໃດ?

ຖ້າວ່າ ທ່ານເກີດໃນຣັຖຄາລິຟໍເນັຽ, ຄາວຕີ້ອາດສາມາດຫາ ບັນທຶກການເກີດຂອງທ່ານໄດ້. (ບັນທຶກການເກີດກໍ່ແມ່ນຫຼັກຖານ ຢັ້ງຢືນການເປັນພົນລະເມືອງ.)

ຈົ່ງປະກອບ ຟອມຮ້ອງຂໍບັນທຶກການເກີດໃນຣັຖຄາລິຟໍເນັຽ ເພື່ອຂໍໃຫ້ຄາວຕີ້ຮ້ອງຂໍເອົາບັນທຶກການເກີດຂອງທ່ານ. ຈາກນັ້ນ, ຈົ່ງສົ່ງຫຼືຖືເອົາຟອມນີ້ໄປທີ່ຫ້ອງການສັງຄົມສົງເຄາະໃນເຂດ ຂອງທ່ານ. ຖ້າວ່າບໍ່ສາມາດຫາບັນທຶກການເກີດຂອງທ່ານໄດ້, ທ່ານຈຳຕ້ອງໄດ້ຈັດຫາຫຼັກຖານຢັ້ງຢືນການເປັນພົນລະເມືອງອີກອັນນຶ່ງ. ຈົ່ງເບິ່ງໜ້າ 3 ສຳລັບລາຍການເອກະສານທີ່ຍອມຮັບໄດ້.

ຈົ່ງຖາມຄາວຕີ້ ກ່ຽວກັບການຫາຫຼັກຖານຢັ້ງຢືນການເປັນພົນລະເມືອງ ຖ້າວ່າທ່ານບໍ່ໄດ້ເກີດໃນຣັຖຄາລິຟໍເນັຽ. ຈົ່ງຕິດຕໍ່ຄາວຕີ້ ເພື່ອເບິ່ງວ່າເຂົາເຈົ້າໄດ້ຄົ້ນພົບບັນທຶກການເກີດທີ່ກົງກັບທ່ານ ຫຼືບໍ່ກ່ອນທີ່ທ່ານຈະຈ່າຍຄ່າສຳລັບໃບຢັ້ງຢືນການເກີດ.

## ຈະເຮັດແນວໃດ ຖ້າວ່າ ຂ້າພະເຈົ້າບໍ່ສາມາດຈັດຫາຫຼັກຖານຢັ້ງຢືນການເປັນພົນລະເມືອງ ຫຼືຢັ້ງຢືນລັກສະນະສ່ວນຕົວບຸກຄົນໄດ້?

ທ່ານຈະມີເວລາພໍສົມຄວນທີ່ຈະຈັດຫາຫຼັກຖານຢັ້ງຢືນຂອງທ່ານ.

ຖ້າວ່າ ທ່ານບໍ່ສາມາດຈັດຫາຫຼັກຖານຢັ້ງຢືນຂອງທ່ານໄດ້ ແຕ່ທ່ານຍັງສືບຕໍ່ມີເງື່ອນໄຂຄົບຖ້ວນຕາມຂໍ້ກໍານົດອື່ນໆ ທັງໝົດ, ທ່ານຈະຖືກປ່ຽນໃຫ້ໄດ້ຮັບການຊ່ວຍເຫຼືອແບບຈໍາກັດ. ການຊ່ວຍເຫຼືອແບບຈໍາກັດລວມມີ ການບໍລິການສຸກເສີນ, ການບໍລິການທີ່ກ່ຽວຂ້ອງກັບການຖືພາ, ແລະການບໍລິການເບິ່ງແຍງລະຍະຍາວ.

ຖ້າວ່າ ທ່ານຈັດຫາຫຼັກຖານຢັ້ງຢືນພາຍໃນນຶ່ງປີໃນເດືອນທີ່ມີການພິຈາລະນາຄືນໃໝ່, ຜົນປະໂຫຍດ Medi-Cal ຂອງທ່ານຈະຖືກປ່ຽນເປັນແບບເຕັມສ່ວນ ໂດຍເລີ້ມແຕ່ເດືອນທີ່ການຊ່ວຍເຫຼືອແບບຈໍາກັດຂອງທ່ານໄດ້ເລີ້ມຕົ້ນ.

ຖ້າວ່າ ທ່ານມີຄ່າໃຊ້ຈ່າຍດ້ານສຸຂະພາບໃນຂະນະຂໍເອົາເອກະສານການເປັນພົນລະເມືອງແລະການຢັ້ງຢືນລັກສະນະສ່ວນຕົວບຸກຄົນ, ທາງ Medi-Cal ອາດຊ່ວຍຈ່າຍໃບບິລເກັບຄ່າໃຫ້ທ່ານໄດ້. ຈົ່ງໂທຣຖາມພະແນກບໍລິການຜູ້ຮັບຜົນປະໂຫຍດທີ່ກິນບໍລິການ ສຸຂະພາບເພື່ອຂໍເອົາຄໍາຕອບຕ່າງໆ: (916) 403-2007.

## ເດັກນ້ອຍຕ້ອງມີຫຼັກຖານຢັ້ງຢືນການເປັນພົນລະເມືອງແລະຢັ້ງຢືນລັກສະນະສ່ວນຕົວບຸກຄົນດ້ວຍບໍ່?

ແມ່ນ. ຖ້າວ່າ ລູກຂອງທ່ານເກີດໃນຣັຖຄາລີຟໍເນັຽ, ຈົ່ງຂໍໃຫ້ຄາວຕີ້ຮ້ອງຂໍເອົາບັນທຶກການເກີດໃນຖານະເປັນຫຼັກຖານຢັ້ງຢືນການເປັນ ພົນລະເມືອງ. ທ່ານກໍຍັງຕ້ອງໄດ້ຈັດຫາຫຼັກຖານຢັ້ງຢືນລັກສະນະສ່ວນຕົວບຸກຄົນ. ເບິ່ງໜ້າ 3.

ຖ້າວ່າ ລູກຂອງທ່ານອາຍຸຕໍ່າກວ່າ 16 ປີແລະທ່ານໄດ້ປະກອບຟອມ ແລະເຊັນຊື່ໃນໃບຄໍາຮ້ອງ Medi-Cal ຫຼືຟອມຄໍາຮ້ອງຮ່ວມ Healthy Families/ Medi-Cal ພ້ອມດ້ວຍວັນທີແລະສະຖານທີ່ເກີດຂອງລູກທ່ານ, ທ່ານກໍ່ບໍ່ຈໍາເປັນ ຕ້ອງຈັດຫາຫຼັກຖານຢັ້ງຢືນລັກສະນະສ່ວນຕົວບຸກຄົນ. (ໃບຄໍາຮ້ອງ ທີ່ເຊັນຊື່ໃສ່ນີ້ກໍ່ແມ່ນຫຼັກຖານຢັ້ງຢືນ ລັກສະນະສ່ວນຕົວບຸກຄົນຂອງລູກທ່ານ.) ແຕ່ທ່ານກໍ່ຍັງຕ້ອງຈັດຫາຫຼັກຖານຢັ້ງຢືນ ການເປັນພົນລະເມືອງ.

ຖ້າວ່າ ລູກຂອງທ່ານອາຍຸ 16 ປີຂຶ້ນໄປ, ທ່ານຈໍາເປັນຕ້ອງຈັດຫາຫຼັກຖານພິສູດລັກສະນະສ່ວນຕົວບຸກຄົນສໍາລັບລູກຂອງທ່ານ. ເບິ່ງໜ້າ 3.

## ຂ້າພະເຈົ້າຕ້ອງຈັດຫາຫຼັກຖານຢັ້ງຢືນການເປັນພົນລະເມືອງ ແລະຢັ້ງຢືນລັກສະນະສ່ວນຕົວບຸກຄົນໃນແຕ່ລະຄັ້ງທີ່ຂ້າພະເຈົ້າຂໍຕໍ່ອາຍຸຄໍາຮ້ອງ ຫຼືບໍ່?

ບໍ່. ທ່ານພຽງແຕ່ຕ້ອງຈັດຫາຫຼັກຖານນີ້ພຽງຄັ້ງດຽວ – ຄືໃນເວລາທ່ານຮ້ອງຂໍຄັ້ງທໍາອິດ ຫຼືໃນເວລາຄົບກໍານົດກວດກາຄືນສິດທີໄດ້ຮັບຂອງທ່ານໃນຮອບປີຕໍ່ໄປ.

## ກົດໝາຍນີ້ມີຜົນກະທົບຕໍ່ກັບຜົນປະໂຫຍດດ້ານ Food Stamps, CalWORKs, ຫຼື Healthy Families ຂອງຂ້າພະເຈົ້າ ບໍ່?

ບໍ່. ຂໍ້ກໍານົດໃໝ່ເລື້ອງການຢັ້ງຢືນການເປັນພົນລະເມືອງແລະການຢັ້ງຢືນລັກສະນະສ່ວນຕົວບຸກຄົນ ນໍາໃຊ້ກັບ Medi-Cal ເທົ່ານັ້ນ.

## ທ່ານຕ້ອງການເອກະສານການເປັນພົນລະເມືອງແລະລັກສະນະສ່ວນຕົວບຸກຄົນສະບັບຕົວຈິງ ບໍ່?

ແມ່ນ. ພວກເຮົາຕ້ອງການເອກະສານການເປັນພົນລະເມືອງແລະການຢັ້ງຢືນລັກສະນະສ່ວນຕົວບຸກຄົນ ສະບັບຕົວຈິງ, ຫຼືສະບັບສໍາເນົາຊຶ່ງມີການຮັບຮອງໂດຍອົງການທີ່ເປັນຜູ້ອອກໃຫ້.

## ຂ້າພະເຈົ້າສາມາດສົ່ງເອກະສານຢັ້ງຢືນທາງໄປສະນີໄດ້ບໍ່?

ໄດ້. ທາງຄາວຕີ້ຈະເຮັດສໍາເນົາແລະສົ່ງສໍາເນົານັ້ນກັບຄືນໃຫ້ທ່ານ. ຫຼື, ທ່ານສາມາດນໍາເອົາເອກະສານຂອງທ່ານໄປທີ່ຫ້ອງການສັງຄົມສົງເຄາະປະຈໍາເຂດຂອງທ່ານກໍ່ໄດ້. ຈົ່ງຂໍໃຫ້ເພິ່ນເຮັດສໍາເນົາ ເອກະສານແລະເອົາເອກະສານຄືນທັນທີ.

# ເອກະສານການເປັນພົນລະເມືອງແລະພິສູດລັກສະນະສ່ວນຕົວບຸກຄົນທີ່ສາມາດຍອມຮັບໄດ້

ທາງທີ່ງ່າຍທີ່ສຸດສຳລັບພົນລະເມືອງ ຫຼືປະຊາຊົນສະຫະຣັຖ ທີ່ຈະພິສູດຫຼັກຖານຢັ້ງຢືນທັງການເປັນພົນລະເມືອງ ແລະການພິສູດລັກສະນະສ່ວນຕົວບຸກຄົນ ກໍ່ແມ່ນການມີເອກະສານ**ໃດນຶ່ງ** ດັ່ງຕໍ່ໄປນີ້:

— ໜັງສືເດີນທາງສະຫະຣັຖຊຶ່ງອອກໃຫ້ໂດຍບໍ່ຈຳກັດ (ເຖິງໝົດອາຍຸແລ້ວກໍ່ຍອມຮັບໄດ້)
— ໃບຢັ້ງຢືນການໄດ້ສັນຊາດ (N-550 ຫຼື N-570)
— ໃບຢັ້ງຢືນການເປັນພົນລະເມືອງສະຫະຣັຖ (N-560 ຫຼື N-561)

**– ຫຼື –**

ຖ້າວ່າ ທ່ານບໍ່ມີເອກະສານໃດນຶ່ງໃນບັນດາເອກະສານຂ້າງເທິງນີ້, ຈົ່ງຈັດຫາ…

## ເອກະສານການເປັນພົນລະເມືອງນຶ່ງຢ່າງຈາກລາຍການຂ້າງລຸ່ມນີ້

- ❖ ໃບຢັ້ງຢືນການເກີດໃນສະຫະຣັຖ
- ❖ ໃບຢັ້ງຢືນການລາຍງານການເກີດ (DS-1350)
- ❖ ລາຍງານການເກີດໃນຕ່າງປະເທດຂອງພົນລະເມືອງສະຫະຣັຖ (FS-240)
- ❖ ໃບຢັ້ງຢືນການເກີດທີ່ອອກໃຫ້ໂດຍກະຊວງປະຈຳຣັຖ (FS-545 ຫຼື DS-1350)
- ❖ ບັດປະຈຳຕົວປະຊາຊົນສະຫະຣັຖ (I-197 ຫຼື I-179)
- ❖ ບັດອະເມລິກັນອິນດຽນແດງ (I-872)
- ❖ ບັດປະຈຳຕົວນອທເທິນ ມາເຣັຽນາ (Northern Marianas) (I-873)
- ❖ ຄຳສັ່ງສານເລື້ອງການຮັບບຸດບຸນທຳ ຊຶ່ງແສະແດງໃຫ້ເຫັນວ່າເກີດໃນສະຫະຣັຖ
- ❖ ຫຼັກຖານຢັ້ງຢືນການຮັບເອົາເດັກຊຶ່ງເກີດນອກສະຫະຣັຖມາລ້ຽງເປັນລູກ ແລະເດັກຢູ່ໃນການຄຸ້ມຄອງທາງຮ່າງກາຍ ແລະທາງກົດໝາຍຂອງພໍ່ແມ່ຊຶ່ງເປັນພົນລະເມືອງສະຫະຣັຖ (IR-3 ຫຼື IR-4)
- ❖ ຫຼັກຖານຢັ້ງຢືນການເປັນລາຊະການພົນລະເຮືອນຂອງສະຫະຣັຖ ກ່ອນວັນທີ 1 ມິຖຸນາ 1976
- ❖ ບັນທຶກການເປັນທະຫານສະຫະຣັຖ ຊຶ່ງສະແດງໃຫ້ເຫັນເຖິງສະຖານທີ່ເກີດໃນສະຫະຣັຖ
- ❖ ບັນທຶກໂຮງໝໍໃນສະຫະຣັຖຊຶ່ງບັນທຶກໃນເວລາທີ່ບຸກຄົນນັ້ນເກີດ *†
- ❖ ບັນທຶກການປະກັນພັຍຊີວິດ, ສຸຂະພາບ ຫຼື ອື່ນໆ *†
- ❖ ບັນທຶກດ້ານສາສະໜາຊຶ່ງຖືກບັນທຶກໄວ້ໃນສະຫະຣັຖພາຍໃນ 3 ເດືອນນັບແຕ່ມື້ເກີດ ຊຶ່ງສະແດງໃຫ້ເຫັນເຖິງສະຖານທີ່ເກີດ ໃນສະຫະຣັຖ ແລະວັນເດືອນປີເກີດ ຫຼືອາຍຸ
- ❖ ບັນທຶກຂອງໂຮງຮຽນຂັ້ນອານບານຊຶ່ງສະແດງໃຫ້ເຫັນເຖິງ ສະຖານທີ່ເກີດໃນສະຫະຣັຖ, ວັນທີຈົດຊື່ເຂົ້າໂຮງຮຽນ, ວັນເດືອນປີເກີດ, ຊື່ແລະສະຖານທີ່ເກີດຂອງພໍ່ແມ່
- ❖ ບັນທຶກສຳມະໂນຄົວຂອງຣັຖບານກາງ ຫຼືຂອງຣັຖ ຊຶ່ງສະແດງໃຫ້ເຫັນອາຍຸ ແລະການເປັນພົນລະເມືອງ ຫຼືສະຖານທີ່ເກີດຂອງຜູ້ຮ້ອງຂໍ
- ❖ ບັນທຶກສຳມະໂນຄົວຊົນເຜົ່າຊີນີຄາ ອິນດຽນແດງ (Seneca Indian) *†
- ❖ ຫ້ອງການດູແລສຳມະໂນຄົວຂອງຊາວອິນດຽນແດງ ຊຶ່ງບັນທຶກຊາວນາວາໂຈ ອິນດຽນແດງ (Navajo Indians) *†
- ❖ ແຈ້ງການການລົງທະບຽນການເກີດຊຶ່ງຖືກບັນທຶກໄວ້ໃນພະແນກສະຖິຕິສຳຄັນປະຈຳຣັຖຢູ່ໃນສະຫະຣັຖ (U.S. State Vital Statistics) *†
- ❖ ບັນທຶກການເກີດສາທາລະນະໃນສະຫະຣັຖທີ່ລ່າຊ້າຊຶ່ງຖືກບັນທຶກເກີນ 5 ປີ ຫຼັງຈາກບຸກຄົນນັ້ນໄດ້ເກີດແລ້ວ *†
- ❖ ຂໍ້ຄວາມກ່າວຊຶ່ງມີລາຍເຊັນຂອງແພດໝໍ ຫຼືນາງຜະດຸງຄັນຊຶ່ງເປັນຜູ້ຢູ່ໃນເວລາເດັກເກີດ *†
- ❖ ລາຍຊື່ຂອງຊາວພື້ນເມືອງອະລາສະກ້າ ຈາກຫ້ອງການດູແລຊາວອິນດຽນແດງ (Bureau of Indian Affairs) *†
- ❖ ເອກະສານການຮັບເຂົ້າຢູ່ໃນສະຖານພະຍາບານວິຊາຊີບ, ຫຼືສະຖາບັນອື່ນໆທີ່ສະແດງໃຫ້ເຫັນວ່າເກີດໃນສະຫະຣັຖ *
- ❖ ບັນທຶກດ້ານການແພດ (ບໍ່ແມ່ນບັນທຶກການສັກຢາປ້ອງກັນພະຍາດ) *†

*ຕ້ອງລົງວັນທີຢ່າງໜ້ອຍ 5 ປີກ່ອນການຮ້ອງຂໍ Medi-Cal ຄັ້ງທຳອິດຂອງ ທ່ານ ແລະສະແດງໃຫ້ເຫັນເຖິງສະຖານທີ່ເກີດໃນສະຫະຣັຖ.
†ສຳລັບເດັກອາຍຸຕ່ຳກວ່າ 16 ປີ, ຕ້ອງບັນທຶກໃກ້ເວລາເກີດ.

ທ່ານ**ຕ້ອງ**ຈັດຫາເອກະສານທີ່ຢູ່ອັນດັບຕົ້ນໆໃນລາຍການກ່ອນເທົ່າທີ່ຈະເຮັດໄດ້.

ຖ້າວ່າ ທ່ານ**ບໍ່ສາມາດ**ຈັດຫາເອກະສານການເປັນພົນລະເມືອງໃດໆເຫຼົ່ານີ້ໄດ້… ຈົ່ງຂໍຮ້ອງໃຫ້ຜູ້ໃຫຍ່ສອງຄົນປະກອບຟອມແລະເຊັນຊື່ໃນໜັງສືຄຳໃຫ້ການການເປັນພົນລະເມືອງ. ຜູ້ໃຫຍທັງສອງຄົນນັ້ນຕ້ອງມີເອກະສານຢັ້ງຢືນຕົວຂອງເຂົາເອງແລະຢັ້ງຢືນການເປັນພົນລະເມືອງສະຫະຣັຖ, ແລະພຽງແຕ່ໜຶ່ງໃນສອງຄົນນັ້ນມີຄວາມກ່ຽວພັນກັບທ່ານ.

**– ແລະ –**

## ເອກະສານການຢັ້ງຢືນລັກສະນະສ່ວນຕົວບຸກຄົນໜຶ່ງຢ່າງຈາກ ລາຍການຂ້າງລຸ່ມນີ້:

- ❖ ໃບຂັບຂີ່ຊຶ່ງອອກໃຫ້ໂດຍຣັຖ ຫຼືອານາເຂດໃນສະຫະຣັຖ ພ້ອມກັບມີຮູບ ຫຼືຂໍ້ມູນອື່ນໆ ທີ່ບົ່ງເຖິງຕົວບຸກຄົນ
- ❖ ບັດປະຈຳຕົວນັກຮຽນພ້ອມກັບມີຮູບ
- ❖ ບັດປະຈຳຕົວທະຫານສະຫະຣັຖ ຫຼືບັນທຶກການເກນທະຫານ
- ❖ ບັດປະຈຳຕົວຂ້າຣາຊການຂອງຣັຖບານກາງ, ຣັຖ ຫຼືທ້ອງຖິ່ນ ພ້ອມກັບມີຂໍ້ມູນບຸກຄົນແບບດຽວກັບໃບຂັບຂີ່
- ❖ ບັດປະຈຳຕົວບຸກຄົນທີ່ຢູ່ພາຍໃຕ້ການດູແລຂອງທະຫານສະຫະຣັຖ
- ❖ ໜັງສືເດີນທາງສະຫະຣັຖ (ອອກໂດຍບໍ່ມີການຈຳກັດ)

- ໃບຢັ້ງຢືນຄຳພິພາກສາວ່າເປັນຄົນອິນດຽນແດງ ຫຼື ອະເມລິກັນອິນດຽນແດງ/ຊາວພື້ນເມືອງອະລາສກ້າ
- ບັດຊາວປະມົງຊຶ່ງອອກໃຫ້ໂດຍພະແນກຮັກສາຄວາມປອດພັຍແຄມຝັ່ງສະຫະຣັຖ
- ເອກະສານຢືນຢັນສານຢ່າງຂື້ນໄປ, ເຊັ່ນ ບັດປະຈຳຕົວພະນັກງານ, ປະກາດສະນີຍະບັດຈົບມັດຖະຍົມປາຍ ຫຼືວິທະຍາໄລ, ໃບອານຸຍາດການແຕ່ງງານ, ຄຳສັ່ງສານໃຫ້ຢ່າຮ້າງ, ແລະໃບຢັ້ງຢືນການເປັນເຈົ້າຂອງຊັບສິນ/ໃບຕາດິນ
- ບັນທຶກຈາກຄລີນິກ, ແພດໝໍ, ຫຼືໂຮງໝໍ ສຳລັບເດັກອາຍຸຕ່ຳກວ່າ 16 ປີ
- ບັນທຶກຂອງໂຮງຮຽນ, ສະຖານຮັບລ້ຽງເດັກ, ຫຼືສະຖານທີ່ຮັບຝາກເດັກຍາມກາງເວັນ, ລວມເຖິງ ບັດລາຍງານ, ສຳລັບເດັກອາຍຸຕ່ຳກວ່າ 16 ປີ. ທາງຄາວຕີ້ຈະພິສູດເບິ່ງຄວາມຖືກຕ້ອງກັບທາງໂຮງຮຽນ.
- ສຳລັບບຸກຄົນພິການຊຶ່ງຢູ່ອາໄສໃນສະຖານເບິ່ງແຍງແບບຢູ່ອາໄສ, ຕ້ອງມີໜັງສືຄຳໃຫ້ການຊຶ່ງມີລາຍເຊັນຂອງຜູ້ອຳນວຍການ ຫຼືຜູ້ບໍລິຫານຂອງສະຖານເບິ່ງແຍງນັ້ນ

**ສຳລັບເດັກອາຍຸຕ່ຳກວ່າ 16 ປີ** ຊຶ່ງບໍ່ໄດ້ຈັດຫາໜັງສື ຄຳໃຫ້ການການເປັນພົນລະເມືອງ, ທ່ານສາມາດສົ່ງ:

- ໜັງສືຄຳໃຫ້ການກ່ຽວກັບລັກສະນະສ່ວນຕົວຂອງເດັກ ຊຶ່ງມີລາຍເຊັນຂອງພໍ່ແມ່, ຜູ້ປົກຄອງຂອງເດັກ, ຜູ້ເບິ່ງແຍງຊຶ່ງເປັນ ຍາດຂອງເດັກພ້ອມກັບວັນທີ ແລະສະຖານທີ່ເກີດ
- ໃບຄຳຮ້ອງຂໍ Medi-Cal ຫຼືໃບຄຳຮ້ອງຮ່ວມ Healthy Families/Medi-Cal ຊຶ່ງສະແດງເຖິງວັນທີແລະສະຖານທີ່ເກີດຂອງເດັກ, ແລະມີລາຍເຊັນຂອງພໍ່ແມ່, ຜູ້ປົກຄອງຂອງເດັກ, ຫຼືຜູ້ເບິ່ງແຍງທີ່ເປັນຍາດຂອງເດັກ.

**ສຳລັບເດັກອາຍຸຕ່ຳກວ່າ 18 ປີ,** ໜັງສືຄຳໃຫ້ການກ່ຽວກັບລັກສະນະສ່ວນຕົວຂອງເດັກ ຊຶ່ງມີລາຍເຊັນຂອງພໍ່ແມ່, ຜູ້ປົກຄອງຂອງເດັກ, ຜູ້ເບິ່ງແຍງຊຶ່ງເປັນຍາດຂອງເດັກ ກໍອາດນຳໃຊ້ໄດ້ ຖ້າວ່າບໍ່ມີບັດປະຈຳຕົວນັກຮຽນ ຫຼືໃບຂັບຂີ່.

ໝາຍເຫດ: ເອກະສານຢັ້ງຢືນຕົວບຸກຄົນທີ່ໝົດອາຍຸແລ້ວ ສາມາດໃຊ້ເປັນເອກະສານພິສູດລັກສະນະສ່ວນຕົວບຸກຄົນທີ່ຍອມຮັບໄດ້.